# ໂຄວິດ-19 ແຜ່ລະບາດໃນຊຸມຊົນໄດ້ແນວໃດ

ບໍ່ແມ່ນທຸກຄົນທີ່ຕິດເຊື້ອໂຄວິດ-19 ຕ້ອງຮູ້ສຶກເປັນໄຂ້. ເຖິງແມ່ນວ່າພວກເຂົາຈະຮູ້ສຶກທຳມະດາຢູ່ກໍຕາມ, ພວກເຂົາສາມາດແຜ່ເຊື້ອໄວຣັສໄປໃສ່ຄົນອື່ນໄດ້.

ຖ້າ ມີຄົນທີ່ເປັນໂຄວິດ-19 ໄປຮ່ວມໃນງານແຕ່ງດອງ, ຫຼື ໄປຮ່ວມງານສົພ, ຫຼື ເຂົ້າຮ່ວມງານລ້ຽງໃຫ່ຍໆຕ່າງໆກໍຕາມ, ພວກເຂົາສາມາດແຜ່ເຊື້ອໄວຣັສໄປສູ່ຄົນອື່ນທີ່ຢູ່ໃນສະຖານທີ່ນັ້ນໆໄດ້ຢ່າງງ່າຍດາຍ, ນີ້ຄືຄວາມຈິງ ໃນເມື່ອຄົນນັ້ນບໍ່ໃສ່ຫນ້າກາກ, ແລະ ຖ້າພວກເຂົາບໍ່ເວັ້ນໄລຍະຫ່າງຢ່າງໜ້ອຍ 6 ຟີດ ຈາກ ຄົນອື່ນ.

ຄົນອື່ນທີ່ຕິດເຊື້ອໃນພິທີງານຕ່າງໆ ໂດຍບໍ່ຮູ້ຕົວ ກໍ່ເລີຍນຳເອົາເຊື້ອໄວຣັສ ມາຕິດໃສ່ຄົນໃນບ້ານ ແລະ ໝູ່ຂອງພວກເຂົາ. ເຖິງແມ່ນເຂົາຈະຢູ່ຕ່າງເມືອງຕ່າງຣັຖກໍຕາມ ໂຄວິດ-19 ກໍ່ຈະຕິດຕົວເຂົາໄປທຸກເເຫ່ງ.

ທຸກຄົນທີ່ເຂົາຢູ່ຮ່ວມນຳໃນບ້ານ ກໍຈະຕິດເຊື້ອຫມົດທຸກຄົນ. ເເລະຈາກນັ້ນ ພວກເຂົານີ້ກໍອາດຈະໄປຕິດໃສ່ຄົນອື່ນຢູ່ທີ່ ບ່ອນທຳງານ, ໂຮງຮຽນ, ຫຼື ຕາມສະຖານທີ່ຕ່າງໆທີ່ມີຄົນຫລາຍ, ຄົນທີ່ຢູ່ໃນສະຖານທີ່ເຫຼົ່ານັ້ນກໍ່ຈະຕິດເຊື້ອຕໍ່ຈາກເຂົາໄດ້ຄືກັນ.

ບັນຫາກໍເລີ່ມຈາກຄົນຜູ້ໜຶ່ງທີ່ເປັນໂຄວິດ-19 ກໍແຜ່ເຊື້ອໄປໃສ່ຄົນອື່ນໆຫລາຍສິບຄົນ ຫລືຫລາຍກວ່ານັ້ນຢ່າງໄວວາ, ເວັ້ນເສັຍແຕ່ທຸກຄົນຊ່ອຍກັນທຸກວິທີທາງ ຢຸດການແຜ່ເຊື້ອໂຣກນີ້.

ເລີ່ມຂັ້ນຕອນໃນການປ້ອງກັນຄອບຄົວ, ໝູ່ເພື່ອນຂອງທ່ານ, ແລະ ແມ້ແຕ່ຄົນທີ່ທ່ານບໍ່ຮູ້ຈັກ.

ໃຫ້ຢູ່ຫ່າງໆ ຈາກກຸ່ມຄົນທີ່ຢູ່ຮ່ວມກັນຫຼາຍຄົນ.

ໃສ່ຫນ້າກາກ.

ຢູ່ຫ່າງໆຈາກຄົນອື່ນ ຢ່າງໜ້ອຍ 6 ຟີດ.

ລ້າງມືຂອງທ່ານ.

ແລະ ພັກຢູ່ເຮືອນຖ້າທ່ານມີເປັນໄຂ້

Minnesota Department of Health
Communications Office
PO Box 64975
St. Paul, MN 55164-0975
651-201-4989
health.communications@state.mn.us
www.health.state.mn.us

10/20/20 (Lao)

*ຕ້ອງການໄດ້ຮັບຂໍ້ມູນນີ້ເປັນຮູບແບບອື່ນ, ໂທຣຫາ: 651-201-4989.*